ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 3972 /ປທສ
ນະຄອນຫຼວງວຽງຈັນ, ວັນທີ 13 ທັນວາ 2019

# ຂໍ້ຕົກລົງ
# ວ່າດ້ວຍ ການອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ

- ອີງຕາມ ກົດໝາຍ ວ່າດ້ວຍ ການໂທລະຄົມມະນາຄົມ (ສະບັບປັບປຸງ) ສະບັບເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ກົດໝາຍ ວ່າດ້ວຍ ເຕັກໂນໂລຢີການສື່ສານ ຂໍ້ມູນຂ່າວສານ ສະບັບເລກທີ 02/ສພຊ, ລົງວັນທີ 07 ພະຈິກ 2016;
- ອີງຕາມ ກົດໝາຍ ວ່າດ້ວຍ ຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ກົດໝາຍ ວ່າດ້ວຍ ການສົ່ງເສີມການລົງທຶນ (ສະບັບປັບປຸງ) ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 22/ນຍ, ລົງວັນທີ 16 ມັງກອນ 2017, ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

## ລັດຖະມົນຕີ ອອກຂໍ້ຕົກລົງ

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຕິດຕາມ, ກວດກາ ແລະ ຄຸ້ມຄອງ ການອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ, ເພື່ອເຮັດໃຫ້ການບໍລິການອິນເຕີເນັດ ມີຄວາມຖືກຕ້ອງ ແລະ ເປັນລະບຽບ, ແນໃສ່ສົ່ງເສີມການນຳໃຊ້ອິນເຕີເນັດໃຫ້ມີຄຸນນະພາບ, ສະດວກ, ວ່ອງໄວ, ປອດໄພ ແລະ ທົ່ວເຖິງ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2. ການອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ**

ການອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ແມ່ນການອະນຸຍາດໃຫ້ບຸກຄົນ ແລະ ນິຕິບຸກຄົນ ດຳເນີນທຸລະກິດບໍລິການອິນເຕີເນັດ ໂດຍຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ໃນການສະໜອງບໍລິການອິນເຕີເນັດໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ.

**ມາດຕາ 3. ອະທິບາຍຄຳສັບ**

**ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:**

1. **ການບໍລິການອິນເຕີເນັດ (Internet Service)** ໝາຍເຖິງ ຮູບແບບການບໍລິການໜຶ່ງຂອງການບໍລິການໂທລະຄົມມະນາຄົມທີ່ສະໜອງການບໍລິການໃຫ້ແກ່ຜູ້ໃຊ້ສາມາດເຂົ້າເຖິງອິນເຕີເນັດໄດ້ດ້ວຍວິທີເຊື່ອມຕໍ່ແບບມີສາຍ ຫຼື ບໍ່ມີສາຍ;
2. **ຜູ້ໃຫ້ບໍລິການອິນເຕີເນັດ (Internet Service Provider)** ໝາຍເຖິງ ຜູ້ໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດໃຫ້ແກ່ຜູ້ໃຊ້ບໍລິການ ສາມາດເຊື່ອມຕໍ່ເຂົ້າຫາອິນເຕີເນັດໄດ້;
3. **ຜູ້ໃຊ້ບໍລິການອິນເຕີເນັດ** ໝາຍເຖິງ ບຸກຄົນ ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ເຊື່ອມຕໍ່ເຂົ້າຫາອິນເຕີເນັດໃນຮູບແບບຕ່າງໆ ເພື່ອອ່ານ, ຂຽນ, ສົ່ງ, ສົ່ງຕໍ່ຂໍ້ມູນຂ່າວສານຜ່ານອິນເຕີເນັດ ;
4. **ການເຊື່ອມຕໍ່ແບບມີສາຍ** ໝາຍເຖິງ ການເຊື່ອມຕໍ່ທີ່ນຳໃຊ້ສາຍຕ່າງໆທີ່ສາມາດເປັນຕົວນຳສົ່ງສັນຍານອິນເຕີເນັດ (Dial-Up, xDSL, FTTx ແລະ ອື່ນໆ);
5. **ການເຊື່ອມຕໍ່ແບບບໍ່ມີສາຍ** ໝາຍເຖິງ ການເຊື່ອມຕໍ່ທີ່ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານເປັນຕົວນຳສົ່ງສັນຍານອິນເຕີເນັດ (WiMAX, Wi-Fi, Satellite, ລະບົບໂທລະສັບເຄື່ອນທີ່ 3G, 4G, 5G ແລະ ອື່ນໆ).

**ມາດຕາ 4. ຫຼັກການພື້ນຖານໃນການດຳເນີນທຸລະກິດບໍລິການອິນເຕີເນັດ**

ການບໍລິການອິນເຕີເນັດ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງລຸ່ມນີ້:

1. ຮັບປະກັນການບໍລິການອິນເຕີເນັດ ໃຫ້ສະເໝີພາບກັນທົ່ວປະເທດ;
2. ຮັບປະກັນການຂະຫຍາຍຕາໜ່າງອິນເຕີເນັດ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ຢ່າງມີປະສິດທິພາບ ແລະ ພາວະວິໄສ;
4. ຮັບປະກັນມາດຕະຖານເຕັກນິກ ແລະ ການເຊື່ອມຕໍ່ເຂົ້າກັບເຄືອຂ່າຍອິນເຕີເນັດ ທັງພາຍໃນ ແລະ ສາກົນ ໃຫ້ມີປະສິດທິພາບສູງ, ວ່ອງໄວ ແລະ ມີຄຸນນະພາບ;
5. ຮັບປະກັນສິດຜົນປະໂຫຍດ ຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການອິນເຕີເນັດ;
6. ຮັບປະກັນການເຊື່ອມຕໍ່ເຄືອຂ່າຍອິນເຕີເນັດ ລວມສູນຜ່ານປະຕູດຽວ.

**ມາດຕາ 5. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບຸກຄົນ ຫຼື ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ໃຫ້ບໍລິການ ຫຼື ໃຊ້ບໍລິການອິນເຕີເນັດ ຢູ່ພາຍໃນ ສປປ ລາວ.

## ໝວດທີ 2
## ປະເພດໃບອະນຸຍາດ ແລະ ການໃຫ້ບໍລິການອິນເຕີເນັດ

### ມາດຕາ 6. ປະເພດໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ

ໃບອະນຸຍາດໃຫ້ບໍລິການອິນເຕີເນັດມີ 03 ປະເພດ ດັ່ງນີ້:

ໃບອະນຸຍາດປະເພດ 1 : ແມ່ນໃບອະນຸຍາດສຳລັບຜູ້ໃຫ້ບໍລິການອິນເຕີເນັດ ທີ່ມີເຄືອຂ່າຍເປັນຂອງຕົນເອງ, ສາມາດໃຫ້ບໍລິການໃນຂອບເຂດທົ່ວປະເທດ;

ໃບອະນຸຍາດປະເພດ 2 : ແມ່ນໃບອະນຸຍາດສຳລັບຜູ້ໃຫ້ບໍລິການອິນເຕີເນັດ ທີ່ມີ ຫຼື ບໍ່ມີເຄືອຂ່າຍເປັນຂອງຕົນເອງ, ສາມາດໃຫ້ບໍລິການໃນຂອບເຂດນະຄອນຫຼວງ ຫຼື ແຂວງ;

ໃບອະນຸຍາດປະເພດ 3 : ແມ່ນໃບອະນຸຍາດສຳລັບຜູ້ໃຫ້ບໍລິການອິນເຕີເນັດ ທີ່ມີ ຫຼື ບໍ່ມີເຄືອຂ່າຍເປັນຂອງຕົນເອງ, ສາມາດໃຫ້ບໍລິການໃນຂອບເຂດເມືອງໃດໜຶ່ງພາຍໃນນະຄອນຫຼວງ ຫຼື ແຂວງ.

### ມາດຕາ 7. ປະເພດການໃຫ້ບໍລິການອິນເຕີເນັດ

ນິຕິບຸກຄົນທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ປະເພດໜຶ່ງ ສາມາດຂໍສິດການໃຫ້ບໍລິການ ດັ່ງນີ້:

1. ບໍລິການອິນເຕີເນັດ ຜ່ານສາຍໂທລະສັບ (Dial-up Modem) ໃນເຄືອຂ່າຍໂທລະສັບພື້ນຖານ (PSTN)
2. ບໍລິການອິນເຕີເນັດ ຜ່ານສາຍໂທລະສັບ (xDSL) ໃນເຄືອຂ່າຍໂທລະສັບພື້ນຖານ (PSTN)
3. ບໍລິການອິນເຕີເນັດ ຜ່ານສາຍເຄເບີນ (Coaxial Cable)
4. ບໍລິການອິນເຕີເນັດ ຜ່ານສາຍໄຟຟ້າ (Power Line)
5. ບໍລິການອິນເຕີເນັດ ຜ່ານສາຍໄຍແກ້ວ (FTTx)
6. ບໍລິການອິນເຕີເນັດ ແບບບໍ່ມີສາຍ (WiMAX, Wi-Fi, LTE, Satellite ແລະ ອື່ນໆ)
7. ບໍລິການອິນເຕີເນັດ ຜ່ານເຄືອຂ່າຍໂທລະສັບມືຖື (GPRS, ລະບົບໂທລະສັບເຄື່ອນທີ່ 3G, 4G, 5G ແລະ ອື່ນໆ)
8. ບໍລິການຄູ່ສາຍເຊົ່າ ຫຼື ວົງຈອນສາຍເຊົ່າ (Leased Line)
9. ບໍລິການສາຍເຊົ່າ ສ່ວນບຸກຄົນ (IPLC, DPLC, MPLS ແລະ ອື່ນໆ)
10. ບໍລິການເຄືອຂ່າຍ ສ່ວນບຸກຄົນ (VPN)
11. ບໍລິການອິນເຕີເນັດ ຜ່ານຈານດາວທຽມຂະໜາດນ້ອຍ (VSAT)

ນິຕິບຸກຄົນທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ປະເພດສອງ ສາມາດຂໍສິດການບໍລິການດັ່ງນີ້:

1. ບໍລິການອິນເຕີເນັດ ຜ່ານສາຍໄຍແກ້ວ (FTTx)
2. ບໍລິການອິນເຕີເນັດ ຜ່ານສາຍເຄເບີນ (Coaxial Cable)
3. ບໍລິການອິນເຕີເນັດ ແບບບໍ່ມີສາຍ (Wi-Fi)

ນິຕິບຸກຄົນທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ປະເພດສາມ ສາມາດຂໍສິດການບໍລິການດັ່ງນີ້:

1. ບໍລິການອິນເຕີເນັດ ຜ່ານສາຍໄຍແກ້ວ (FTTx)
2. ບໍລິການອິນເຕີເນັດ ຜ່ານສາຍເຄເບີນ (Coaxial Cable)
3. ບໍລິການອິນເຕີເນັດ ແບບບໍ່ມີສາຍ (Wi-Fi)

## ໝວດທີ 3
## ການຂໍອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ

### ມາດຕາ 8. ການຂໍອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດບໍລິການອິນເຕີເນັດ ຕ້ອງຂໍອະນຸຍາດນຳຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໂດຍປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ພ້ອມປະກອບເອກະສານດັ່ງນີ້:

1. ໜັງສືສະເໜີ;
2. ຮູບສີ 3x4 ຈຳນວນ 2 ໃບບໍ່ເກີນ 3 ເດືອນ;
3. ສຳເນົາໃບທະບຽນວິສາຫະກິດ;
4. ບົດວິພາກເສດຖະກິດ;
5. ບົດວິພາກເຕັກນິກ;
6. ສຳເນົາສຳມະໂນຄົວ ຫຼື ບັດປະຈຳຕົວ ຫຼື ໜັງສືຜ່ານແດນ;
7. ໃບຢັ້ງຢືນທີ່ຢູ່;
8. ໃບຢັ້ງຢືນທີ່ຕັ້ງສຳນັກງານ;
9. ຊີວະປະຫວັດລະອຽດຜູ້ບໍລິຫານ;
10. ຊີວະປະຫວັດຫຍໍ້ວິຊາການເຕັກນິກ ແລະ ໃບຢັ້ງຢືນການສຶກສາ;
11. ໃບຢັ້ງຢືນສະຖານະການການເງິນ/ບັນຊີເຄື່ອນໄຫວທຸລະກິດ ຈາກທະນາຄານພາຍໃນ ສປປ ລາວ;
12. ສັນຍາອື່ນທີ່ກ່ຽວຂ້ອງ ເປັນຕົ້ນສັນຍາເຊົ່າເຄືອຂ່າຍ, ສັນຍາເຊົ່າໂຄງລ່າງພື້ນຖານ ແລະ ອື່ນໆ (ພາຍຫຼັງໄດ້ຮັບອະນຸຍາດ 03 ເດືອນ)

**ມາດຕາ 9. ເງື່ອນໄຂພິຈາລະນາອອກໃບອະນຸຍາດ**

ເງື່ອນໄຂໃນການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດມີດັ່ງນີ້:

1. ຕ້ອງປະກອບເອກະສານຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;
2. ໃນກໍລະນີການດຳເນີນທຸລະກິດບໍລິການອິນເຕີເນັດທີ່ຕ້ອງນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ເຊັ່ນ: ຄື້ນຄວາມຖີ່ວິທະຍຸສື່ສານ ແມ່ນຕ້ອງໄດ້ຮັບໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານເສຍກ່ອນ;
3. ຕ້ອງບໍ່ຢູ່ໃນຊ່ວງໄລຍະຖືກອາຍັດຊັບສິນ, ຢູ່ໃນຂະບວນການລົ້ມລະລາຍ ຫຼື ຖືກສານຕັດສິນເປັນຜູ້ລົ້ມລະລາຍ ຕາມກົດໝາຍຂອງ ສປປ ລາວ;
4. ປະຕິບັດຕາມເງື່ອນໄຂອື່ນທີ່ຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 10. ໄລຍະເວລາພິຈາລະນາອອກໃບອະນຸຍາດ**

ອົງການຄຸ້ມຄອງ ແລະ ກວດກາການບໍລິການອິນເຕີເນັດ ຈະພິຈາລະນາອອກໃບອະນຸຍາດ ຕາມໄລຍະເວລາຂອງແຕ່ລະປະເພດ ດັ່ງລຸ່ມນີ້:

- ໃບອະນຸຍາດປະເພດ 1 ໃຊ້ເວລາພິຈາລະນາພາຍໃນ 30 ວັນລັດຖະການ.
- ໃບອະນຸຍາດປະເພດ 2 ໃຊ້ເວລາພິຈາລະນາພາຍໃນ 20 ວັນລັດຖະການ.
- ໃບອະນຸຍາດປະເພດ 3 ໃຊ້ເວລາພິຈາລະນາພາຍໃນ 15 ວັນລັດຖະການ.

**ມາດຕາ 11. ອາຍຸຂອງໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ**

ອາຍຸຂອງໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ແບ່ງອອກເປັນ 02 ໄລຍະຄື:

1. ໄລຍະທີໜຶ່ງ: ອອກໃບອະນຸຍາດຊົ່ວຄາວ ຊຶ່ງແຕ່ລະປະເພດມີອາຍຸ ໜຶ່ງປີ;
2. ໄລຍະທີສອງ: ອອກໃບອະນຸຍາດສົມບູນ ຊຶ່ງມີອາຍຸຕາມແຕ່ລະປະເພດດັ່ງນີ້:
   - ໃບອະນຸຍາດປະເພດ 1 ມີອາຍຸນຳໃຊ້ ຫ້າປີ;
   - ໃບອະນຸຍາດປະເພດ 2 ມີອາຍຸນຳໃຊ້ ສາມປີ;
   - ໃບອະນຸຍາດປະເພດ 3 ມີອາຍຸນຳໃຊ້ ສອງປີ.

**ມາດຕາ 12. ການຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ**

1. **ການປະກອບເອກະສານ**

ການຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ຕ້ອງຍື່ນໃບຄຳຮ້ອງຂໍຕໍ່ ກ່ອນວັນໝົດອາຍຸຢ່າງໜ້ອຍ 30 ວັນ ແລະ ຕ້ອງປະກອບເອກະສານດັ່ງນີ້:

1. ໜັງສືສະເໜີ;
2. ຮູບສີ 3x4 ຈຳນວນ 2 ໃບ ບໍ່ເກີນ 3 ເດືອນ;
3. ໃບອະນຸຍາດສະບັບເກົ່າ;
4. ໃບຢັ້ງຢືນການເສຍອາກອນ;
5. ບົດສະຫຼຸບການເຄື່ອນໄຫວການດຳເນີນທຸລະກິດທີ່ຜ່ານມາ;

6. ໃບຢັ້ງຢືນການຈ່າຍຄ່ານໍາໃຊ້ຊັບພະຍາກອນໂທລະຄົມມະນາຄົມ;

7. ບົດສະຫຼຸບທາງດ້ານການເງິນ;

8. ສໍາເນົາໃບທະບຽນວິສາຫະກິດ; (ຖ້າມີການປ່ຽນແປງ)

9. ບົດວິພາກເສດຖະກິດ; (ຖ້າມີການປ່ຽນແປງ)

10. ບົດວິພາກເຕັກນິກ; (ຖ້າມີການປ່ຽນແປງ)

11. ສໍາເນົາສໍາມະໂນຄົວ ຫຼື ບັດປະຈໍາຕົວ ຫຼື ໜັງສືຜ່ານແດນ; (ຖ້າມີການປ່ຽນແປງ)

12. ໃບຢັ້ງຢືນທີ່ຢູ່; (ຖ້າມີການປ່ຽນແປງ)

13. ໃບຢັ້ງຢືນທີ່ຕັ້ງສໍານັກງານ; (ຖ້າມີການປ່ຽນແປງ)

14. ຊີວະປະຫວັດລະອຽດຜູ້ບໍລິຫານ; (ຖ້າມີການປ່ຽນແປງ)

15. ຊີວະປະຫວັດຫຍໍ້ວິຊາການເຕັກນິກ ແລະ ໃບຢັ້ງຢືນການສຶກສາ; (ຖ້າມີການປ່ຽນແປງ)

16. ສັນຍາອື່ນທີ່ກ່ຽວຂ້ອງ ເປັນຕົ້ນສັນຍາເຊົ່າເຄືອຂ່າຍ, ສັນຍາເຊົ່າໂຄງລ່າງພື້ນຖານ ແລະ ອື່ນໆ (ຖ້າມີການປ່ຽນແປງ)

2. **ເງື່ອນໄຂການຕໍ່ອາຍຸໃບອະນຸຍາດ**

ເງື່ອນໄຂໃນການພິຈາລະນາຕໍ່ອາຍຸ ໃບອະນຸຍາດດໍາເນີນທຸລະກິດບໍລິການອິນເຕີເນັດ ມີດັ່ງນີ້:

- ຕ້ອງດໍາເນີນທຸລະກິດໂດຍບໍ່ຂັດກັບລະບຽບຂອງກະຊວງ ປທສ;
- ຕ້ອງປະກອບເອກະສານຄົບຖ້ວນຕາມທີ່ໄດ້ກໍານົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້;
- ຜູ້ໄດ້ຮັບໃບອະນຸຍາດ ຈະໄດ້ຮັບການພິຈາລະນາ ຕໍ່ໃບອະນຸຍາດເປັນໃບອະນຸຍາດສົມບູນ ໃນກໍລະນີທີ່ຜູ້ຮ້ອງຂໍສາມາດປະຕິບັດໄດ້ຢ່າງໜ້ອຍ 60% ຂອງແຜນການປີທໍາອິດ.

3. **ໄລຍະເວລາພິຈາລະນາຕໍ່ໃບອະນຸຍາດ**

ໄລຍະເວລາການພິຈາລະນາຕໍ່ໃບອະນຸຍາດແຕ່ລະປະເພດມີດັ່ງນີ້:

- ໃບອະນຸຍາດປະເພດ 1: ໃຊ້ເວລາພິຈາລະນາພາຍໃນ 20 ວັນລັດຖະການ;
- ໃບອະນຸຍາດປະເພດ 2: ໃຊ້ເວລາພິຈາລະນາພາຍໃນ 15 ວັນລັດຖະການ;
- ໃບອະນຸຍາດປະເພດ 3: ໃຊ້ເວລາພິຈາລະນາພາຍໃນ 10 ວັນລັດຖະການ.

ໃນກໍລະນີເອກະສານຂອງຜູ້ຮ້ອງຂໍບໍ່ຄົບຖ້ວນ, ບໍ່ຖືກຕ້ອງ ຫຼື ບໍ່ມີເງື່ອນໄຂພຽງພໍ ທີ່ຈະໄດ້ຮັບອະນຸຍາດ , ອົງການຄຸ້ມຄອງ ແລະ ກວດກາ ຈະບໍ່ພິຈາລະນາອອກ ຫຼື ຕໍ່ໃບອະນຸຍາດໃຫ້.

ອົງການຄຸ້ມຄອງ ແລະ ກວດກາ ການບໍລິການອິນເຕີເນັດ ຈະແຈ້ງສາເຫດທີ່ບໍ່ພິຈາລະນາເປັນລາຍລັກອັກສອນພາຍໃນ 10 ວັນລັດຖະການ.

### ມາດຕາ 13. ການປ່ຽນແປງ, ໂຈະ ຫຼື ຍົກເລີກ

ຜູ້ໃຫ້ບໍລິການອິນເຕີເນັດທີ່ຕ້ອງການປ່ຽນແປງເນື້ອໃນໃບອະນຸຍາດ, ໂຈະ ຫຼື ຍົກເລີກ ການໃຫ້ບໍລິການຂອງຕົນ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານກ່ອນ. ຜູ້ໃຫ້ບໍລິການອິນເຕີເນັດ ຕ້ອງສະເໜີພ້ອມຊີ້ແຈງເຫດຜົນຢ່າງເປັນລາຍລັກອັກສອນ.

# ໝວດທີ 4
# ມາດຕະຖານເຕັກນິກ ແລະ ຄວາມປອດໄພ

**ມາດຕາ 14. ມາດຕະຖານເຕັກນິກ**

ມາດຕະຖານເຕັກນິກ ຂອງການບໍລິການອິນເຕີເນັດ ປະກອບມີດັ່ງລຸ່ມນີ້:

1. **ສະຖານທີ່:**
   - ຈຸດທີ່ຕັ້ງຂອງສູນບໍລິການອິນເຕີເນັດ ຕ້ອງຕັ້ງຢູ່ໃນຂອບເຂດທີ່ໄດ້ຮັບການອະນຸຍາດ;
   - ຫ້ອງຄວບຄຸມລະບົບບໍລິການອິນເຕີເນັດ, ຫ້ອງຕິດຕັ້ງອຸປະກອນເຊີເວີ້, ຫ້ອງການ ແລະ ຫ້ອງອື່ນທີ່ຈຳເປັນ ຕ້ອງຮັບປະກັນລະບົບໄຟຟ້າ, ລະບົບຄວບຄຸມຄວາມເຢັນ, ລະບົບປ້ອງກັນອັກຄີໄພ ແລະ ລະບົບອື່ນໆທີ່ຈຳເປັນ ຕາມການກຳນົດມາດຖານຂອງຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.
2. **ການເຊື່ອມຕໍ່ຫາອິນເຕີເນັດ:**
   - ໃບອະນຸຍາດປະເພດ 1: ສາມາດເຊື່ອມຕໍ່ອິນເຕີເນັດ ກັບຕ່າງປະເທດໄດ້ໂດຍກົງ ໂດຍຜ່ານສູນອິນເຕີເນັດແຫ່ງຊາດ;
   - ໃບອະນຸຍາດປະເພດ 2: ການເຊື່ອມຕໍ່ຫາອິນເຕີເນັດ ຕ້ອງຜ່ານເຄືອຂ່າຍຂອງຜູ້ໃຫ້ບໍລິການອິນເຕີເນັດ ປະເພດ 1;
   - ໃບອະນຸຍາດປະເພດ 3: ການເຊື່ອມຕໍ່ຫາອິນເຕີເນັດ ຕ້ອງຜ່ານເຄືອຂ່າຍຂອງຜູ້ໃຫ້ບໍລິການອິນເຕີເນັດ ປະເພດ 1 ຫຼື 2.
3. **ລະບົບເຄືອຂ່າຍ:** ໃນບົດວິພາກເຕັກນິກຕ້ອງມີແຜນວາດລວມຂອງເຄືອຂ່າຍ, ແຜນວາດການຕິດຕັ້ງອຸປະກອນ, ລາຍລະອຽດຂອງອຸປະກອນ ແລະ ລະບົບຊອບແວ ທີ່ຈະນຳໃຊ້.
4. **ອຸປະກອນ:**
   - ອຸປະກອນທີ່ຈະນຳເຂົ້າມາຈາກຕ່າງປະເທດ ເພື່ອຮັບໃຊ້ເຂົ້າໃນການບໍລິການ ຕ້ອງໄດ້ຮັບການອະນຸຍາດຈາກຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
   - ອຸປະກອນທີ່ນຳມາໃຊ້ໃນລະບົບການບໍລິການອິນເຕີເນັດ ຕ້ອງໄດ້ຜ່ານການກວດກາ ແລະ ຢັ້ງຢືນຮັບຮອງມາດຕະຖານ ຈາກຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
   - ຕ້ອງມີການບຳລຸງຮັກສາ ແລະ ສ້ອມແປງໃຫ້ຢູ່ໃນສະພາບທີ່ໃຊ້ງານໄດ້ຢ່າງປົກກະຕິ ແລະ ຕ້ອງມີອຸປະກອນສຳຮອງ ເພື່ອໃຫ້ສາມາດບໍລິການໄດ້ຢ່າງບໍ່ມີຂໍ້ຈຳກັດ.
5. **ການເກັບຮັກສາປະຫວັດການນຳໃຊ້:** ຕ້ອງມີອຸປະກອນບັນທຶກ ແລະ ເກັບຮັກສາຂໍ້ມູນປະຫວັດການນຳໃຊ້ບໍລິການອິນເຕີເນັດ ຂອງຜູ້ໃຊ້ບໍລິການຢ່າງໜ້ອຍ 90 ວັນ ເຊັ່ນ: Log file, CDR file ແລະ ອື່ນໆ ຕາມການກຳນົດຂອງອົງການຄຸ້ມຄອງ ແລະ ກວດກາ ການບໍລິການອິນເຕີເນັດ.

**ມາດຕາ 15. ມາດຕະຖານ ຄວາມປອດໄພ**

ມາດຕະຖານຄວາມປອດໄພ ຂອງການບໍລິການອິນເຕີເນັດ ປະກອບມີດັ່ງນີ້:

1. ຕ້ອງຮັບປະກັນຄວາມປອດໄພຂໍ້ມູນທັງໝົດຂອງຜູ້ໃຊ້ບໍລິການ ບໍ່ໃຫ້ຖືກທຳລາຍ, ປ່ຽນແປງ ຫຼື ໂຈລະກຳ;

2. ຕ້ອງມີລະບົບສຳຮອງຂໍ້ມູນ ເພື່ອຮັບປະກັນໃຫ້ນຳໃຊ້ໄດ້ຢ່າງເປັນປົກກະຕິ ແລະ ມີການປ້ອງກັນເຫດການທີ່ອາດເກີດຂຶ້ນ ເຊັ່ນ: ອັກຄີໄພ, ນ້ຳຖ້ວມ ແລະ ໄພທຳມະຊາດອື່ນໆ;
3. ຕ້ອງມີລະບົບກັ່ນຕອງຂໍ້ມູນ ແລະ ລະບົບຮັກສາຄວາມປອດໄພ ເພື່ອປ້ອງກັນການເຂົ້າຫາເວັບໄຊ ແລະ ແຫຼ່ງຂໍ້ມູນທີ່ມີຜົນກະທົບທາງລົບຕໍ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ກະທົບເຖິງວຽກງານວັດທະນະທຳ-ສັງຄົມ;
4. ຕ້ອງຮັບປະກັນ ບໍ່ໃຫ້ເປັນບ່ອນທີ່ຜູ້ບໍ່ຫວັງດີ ນຳໃຊ້ເພື່ອທຳລາຍ ຫຼື ສ້າງຄວາມເສຍຫາຍຕໍ່ຜູ້ອື່ນ.

## ໝວດທີ 5
## ການຄຸ້ມຄອງ ແລະ ກວດກາ ການບໍລິການອິນເຕີເນັດ

### ມາດຕາ 16. ອົງການຄຸ້ມຄອງ ແລະ ກວດກາ ການບໍລິການອິນເຕີເນັດ

ອົງການຄຸ້ມຄອງ ແລະ ກວດກາ ການບໍລິການອິນເຕີເນັດ ມີດັ່ງນີ້:

1. ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
2. ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ.

### ມາດຕາ 17. ສິດ ແລະ ໜ້າທີ່ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາອະນຸມັດ, ຕໍ່, ປ່ຽນແປງ, ໂຈະ ແລະ ຖອນ ໃບອະນຸຍາດບໍລິການອິນເຕີເນັດ;
2. ຕິດຕາມ ແລະ ກວດກາ ການປະຕິບັດເງື່ອນໄຂ, ມາດຕະຖານ ແລະ ລະບຽບການ ຕາມຂໍ້ຕົກລົງສະບັບນີ້;
3. ກ່າວເຕືອນ, ສຶກສາອົບຮົມ ຫຼື ປັບໃໝ ຕໍ່ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້;
4. ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບການໃຫ້ບໍລິການອິນເຕີເນັດ ເປັນຕົ້ນ: ຄຸນນະພາບການບໍລິການ, ມາດຕະຖານເຕັກນິກ ແລະ ຄ່າບໍລິການຕ່າງໆ;
5. ເກັບຄ່າທຳນຽມ ແລະ ຄ່າບໍລິການ ໃນການອອກໃບອະນຸຍາດໃຫ້ບໍລິການອິນເຕີເນັດ ແລະ ຄ່າອື່ນໆ ຕາມກົດໝາຍ ແລະ ລະບຽບການ;
6. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 18. ສິດ ແລະ ໜ້າທີ່ ຂອງພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານແຂວງ, ນະຄອນຫຼວງ

ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາອອກ, ຕໍ່, ປ່ຽນແປງ, ໂຈະ ແລະ ຖອນ ໃບອະນຸຍາດບໍລິການອິນເຕີເນັດ ຕາມລະບຽບການທີ່ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດໃຫ້;
2. ຕິດຕາມ ແລະ ກວດກາ ການປະຕິບັດເງື່ອນໄຂ, ມາດຕະຖານ ແລະ ລະບຽບການ ຕາມຂໍ້ຕົກລົງສະບັບນີ້;
3. ກ່າວເຕືອນ, ສຶກສາອົບຮົມ ຫຼື ປັບໃໝ ຕໍ່ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້;
4. ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບການບໍລິການອິນເຕີເນັດ ເປັນຕົ້ນ ຄຸນນະພາບການບໍລິການ, ມາດຕະຖານເຕັກນິກ ແລະ ຄ່າບໍລິການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ເກັບຄ່າທຳນຽມ ແລະ ຄ່າບໍລິການໃນການອອກໃບອະນຸຍາດບໍລິການອິນເຕີເນັດ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 19. ສິດ ແລະ ພັນທະ ຂອງຜູ້ໃຫ້ບໍລິການອິນເຕີເນັດ**

ຜູ້ໃຫ້ບໍລິການອິນເຕີເນັດ ມີສິດ ແລະ ພັນທະ ດັ່ງນີ້:

1. ສະເໜີຂໍຕໍ່, ໂຈະ ຫຼື ຍຸບເລີກ ການດຳເນີນທຸລະກິດຂອງຕົນ;
2. ໂຈະການໃຫ້ບໍລິການແກ່ຜູ້ໃຊ້ບໍລິການ ຕາມສັນຍາ;
3. ໃຫ້ຄວາມຮ່ວມມືຕໍ່ພະນັກງານຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ເຈົ້າໜ້າທີ່ກ່ຽວຂ້ອງໃນການຕິດຕາມ ແລະ ກວດກາ;
4. ອະນຸຍາດຜູ້ໃຫ້ບໍລິການອິນເຕີເນັດລາຍອື່ນເຊົ່າເຄືອຂ່າຍຂອງຕົນ ຕາມຄວາມເໝາະສົມ;
5. ປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ລາຍງານຂໍ້ມູນທີ່ເຫັນວ່າເປັນຜົນກະທົບເຖິງຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນອັນຕະລາຍຕໍ່ສັງຄົມ;
6. ປະຕິບັດລະບຽບການເຊື່ອມຕໍ່ອິນເຕີເນັດ ຕາມການກຳນົດໃນມາດຕາ 14 ຂໍ້2 ຂອງຂໍ້ຕົກລົງສະບັບນີ້;
7. ສະໜອງຂໍ້ມູນ ແລະ ສັນຍາການເຊື່ອມຕໍ່ອິນເຕີເນັດ ຢ່າງຄົບຖ້ວນ ແລະ ຖືກຕ້ອງໃຫ້ແກ່ຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
8. ຮັກສາຂໍ້ມູນຂອງຜູ້ໃຊ້ບໍລິການໃຫ້ເປັນຄວາມລັບ ແລະ ປອດໄພ, ຍົກເວັ້ນກໍລະນີ ມີຄຳສັ່ງຈາກອົງການຈັດຕັ້ງທີ່ມີສິດອຳນາດກ່ຽວຂ້ອງ;
9. ສະໜອງຂໍ້ມູນຂ່າວສານ ກ່ຽວກັບການບໍລິການຕ່າງໆໃຫ້ແກ່ຜູ້ໃຊ້ບໍລິການ ຢ່າງເປັນປົກກະຕິ;
10. ຮັບປະກັນການບໍລິການທີ່ມີຄຸນນະພາບ ແລະ ລາຄາຍຸຕິທຳ ຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;
11. ແກ້ໄຂບັນຫາ ແລະ ຂໍ້ຂັດຂ້ອງ ທາງດ້ານເຕັກນິກໃຫ້ແກ່ຜູ້ໃຊ້ບໍລິການ ຕາມລະບຽບການ;
12. ລາຍງານຂໍ້ມູນການບໍລິການອິນເຕີເນັດຂອງຕົນ ເຊັ່ນ: ການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ, ດ້ານເຕັກນິກ ແລະ ຄວາມປອດໄພ ໃຫ້ຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຢ່າງເປັນປົກກະຕິ;
13. ປະກອບສ່ວນ ແລະ ສົ່ງເສີມ ການນຳໃຊ້ອິນເຕີເນັດເຂົ້າໃນຂົງເຂດການສຶກສາ, ສາທາລະນະສຸກ, ເຂດຊົນນະບົດ ຫຼື ວຽກງານສາທາລະນະອື່ນໆ;
14. ເສຍຄ່າທຳນຽມ, ຄ່າບໍລິການ ແລະ ອາກອນອື່ນໆໃຫ້ລັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
15. ປະຕິບັດ ສິດ ແລະ ພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 20. ສິດ ແລະ ພັນທະ ຂອງຜູ້ໃຊ້ບໍລິການອິນເຕີເນັດ**

ຜູ້ໃຊ້ບໍລິການອິນເຕີເນັດ ມີສິດ ແລະ ພັນທະ ດັ່ງນີ້:

1. ເລືອກການໃຊ້ບໍລິການຕາມຄວາມຕ້ອງການ;
2. ທວງຖາມ ຫຼື ຮ້ອງຟ້ອງຜູ້ໃຫ້ບໍລິການອິນເຕີເນັດເມື່ອໄດ້ຮັບການບໍລິການທີ່ບໍ່ເປັນທຳ;
3. ຈ່າຍຄ່າບໍລິການຕາມລະບຽບການ;
4. ຮັບຜິດຊອບຕໍ່ເນື້ອໃນຂໍ້ມູນ ຂ່າວສານຂອງຕົນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ;
5. ປະຕິບັດ ສິດ ແລະ ພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 21. ຄ່າທຳນຽມ**

ຄ່າທຳນຽມ ໃນການຂໍໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ ກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 22. ຄ່າບໍລິການ**

ຄ່າບໍລິການ ໃນການຂໍໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ ກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 23. ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ ຫຼື ນິຕິບຸກຄົນ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດບໍລິການອິນເຕີເນັດໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳໃຊ້ໃບອະນຸຍາດຂອງຜູ້ອື່ນ;
3. ອົງການຈັດຕັ້ງ, ບຸກຄົນ, ນິຕິບຸກຄົນ ນຳໃຊ້ອິນເຕີເນັດຈາກຕ່າງປະເທດ.

**ມາດຕາ 24. ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການອິນເຕີເນັດ**

ຫ້າມ ບຸກຄົນ ຫຼື ນິຕິບຸກຄົນ ທີ່ເຄື່ອນໄຫວດຳເນີນທຸລະກິດບໍລິການອິນເຕີເນັດ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດບໍລິການອິນເຕີເນັດໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳໃບອະນຸຍາດໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນ;
3. ບໍລິການເກີນປະເພດ ຫຼື ຂອບເຂດທີ່ໄດ້ຮັບອະນຸຍາດ;
4. ຂະຫຍາຍເຄືອຂ່າຍ, ເຊື່ອມຕໍ່ເຄືອຂ່າຍ ຫຼື ດັດແປງລະບົບເຕັກນິກ ໂດຍບໍ່ໄດ້ຮັບອະນຸຍາດ;
5. ເຊື່ອມຕໍ່ເຄືອຂ່າຍອອກສູ່ສາກົນໂດຍບໍ່ໄດ້ຮັບອະນຸຍາດ ສຳລັບໃບອະນຸຍາດປະເພດໜຶ່ງ;
6. ນຳໃຊ້ສາຍສົ່ງເຊື່ອມຕໍ່ອອກຕ່າງປະເທດໂດຍກົງ ສຳລັບໃບອະນຸຍາດປະເພດສອງ ແລະ ປະເພດສາມ;
7. ໂຄສະນາໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍໃຫ້ຜູ້ບໍລິການລາຍອື່ນ;
8. ປອມແປງ, ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ, ເຊື່ອງອຳຂໍ້ມູນ ຫຼື ບໍ່ໃຫ້ຄວາມຮ່ວມມື ກັບອົງການຄຸ້ມຄອງ ແລະ ກວດກາ ການບໍລິການອິນເຕີເນັດ;
9. ບັນທຶກ ແລະ ເກັບຮັກສາຂໍ້ມູນປະຫວັດການນຳໃຊ້ບໍລິການອິນເຕີເນັດ ຂອງຜູ້ໃຊ້ບໍລິການຕໍ່າກວ່າ 90 ວັນ ຫຼື ທຳລາຍຂໍ້ມູນການບໍລິການອິນເຕີເນັດ;
10. ເປີດເຜີຍຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງ ຫຼື ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
11. ບໍລິການ ຫຼື ເກັບຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມສັນຍາ ຫຼື ບໍ່ຖືກຕ້ອງຕາມແຈ້ງການໃນສື່ຕ່າງໆ;
12. ດຳເນີນທຸລະກິດ ໂດຍນຳໃຊ້ໃບອະນຸຍາດທີ່ໝົດອາຍຸແລ້ວ;
13. ຜູກຂາດ ແລະ ກີດກັນ ຜູ້ໃຫ້ບໍລິການໃໝ່;
14. ອຸດໜູນການບໍລິການ, ຄອບງຳ ຫຼື ໃຊ້ອຳນາດການແຂ່ງຂັນທາງການຕະຫຼາດທີ່ບໍ່ເປັນທຳຕໍ່ຜູ້ປະກອບການຂະໜາດຍ່ອຍ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 25. ນະໂຍບາຍຕໍ່ຜູ້ມີຜົນງານ**

ຜູ້ໃຫ້ການບໍລິການໄດ້ດໍາເນີນງານຢ່າງມີຄຸນນະພາບຖືກຕ້ອງ ແລະ ສອດຄ່ອງຕາມຂໍ້ກໍານົດສະບັບນີ້ຈະໄດ້ຮັບການຍ້ອງຍໍ ຫຼື ໄດ້ຮັບນະໂຍບາຍອື່ນໆຕາມຄວາມເໝາະສົມ.

**ມາດຕາ 26. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ,ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ລະເມີດຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ຖືກປັບໃໝ ຫຼື ລົງໂທດທາງແພ່ງ ຫຼື ທາງອາຍາ ແລ້ວແຕ່ລະກໍລະນີເບົາ ຫຼື ໜັກ ລວມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 27. ມາດຕະການປັບໃໝ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ດໍາເນີນທຸລະກິດບໍລິການອິນເຕີເນັດໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 50,000,000ກີບ;
2. ນໍາໃບອະນຸຍາດໃຫ້ຜູ້ອື່ນນໍາໃຊ້, ເຊົ່າ ຫຼື ໂອນ ຈະຖືກປັບໃໝ 30,000,000 ກີບ ສໍາລັບໃບອະນຸຍາດປະເພດໜຶ່ງ, 20,000,000 ກີບ ສໍາລັບໃບອະນຸຍາດປະເພດສອງ ແລະ 10,000,000 ກີບ ສໍາລັບໃບອະນຸຍາດປະເພດສາມ;
3. ບໍລິການເກີນປະເພດ ຫຼື ຂອບເຂດທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 10,000,000 ກີບ;
4. ຂະຫຍາຍເຄືອຂ່າຍ, ເຊື່ອມຕໍ່ເຄືອຂ່າຍ ຫຼື ດັດແປງລະບົບເຕັກນິກ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 10,000,000 ກີບ;
5. ເຊື່ອມຕໍ່ເຄືອຂ່າຍອອກສູ່ສາກົນໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 10,000,000 ກີບ;
6. ນໍາໃຊ້ສາຍສົ່ງເຊື່ອມຕໍ່ອອກຕ່າງປະເທດໂດຍກົງ ສໍາລັບໃບອະນຸຍາດປະເພດສອງ ແລະ ປະເພດສາມ ຈະຖືກປັບໃໝ 10,000,000 ກີບ;
7. ໂຄສະນາໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍໃຫ້ຜູ້ບໍລິການລາຍອື່ນ ຈະຖືກປັບໃໝ 5,000,000 ກີບ;
8. ປອມແປງ, ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ, ເຊື່ອງອໍາຂໍ້ມູນ ຫຼື ບໍ່ໃຫ້ຄວາມຮ່ວມມື ກັບອົງການຄຸ້ມຄອງ ແລະ ກວດກາ ການບໍລິການອິນເຕີເນັດ ຈະຖືກປັບໃໝ 3,000,000 ກີບ;
9. ບັນທຶກ ແລະ ເກັບຮັກສາຂໍ້ມູນປະຫວັດການນໍາໃຊ້ບໍລິການອິນເຕີເນັດ ຂອງຜູ້ໃຊ້ບໍລິການຕໍ່າກວ່າ 90 ວັນ ຫຼື ທໍາລາຍຂໍ້ມູນການບໍລິການອິນເຕີເນັດ ຈະຖືກປັບໃໝ 3,000,000 ກີບ;
10. ເປີດເຜີຍຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງ ຫຼື ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຈະຖືກປັບໃໝ 5,000,000 ກີບ;
11. ບໍລິການ ຫຼື ເກັບຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມສັນຍາ ຫຼື ບໍ່ຖືກຕ້ອງຕາມແຈ້ງການໃນສື່ຕ່າງໆ ຈະຖືກປັບໃໝ 5,000,000 ກີບ;

12. ດຳເນີນທຸລະກິດ ໂດຍນຳໃຊ້ໃບອະນຸຍາດທີ່ໝົດອາຍຸແລ້ວ ຈະຖືກປັບໃໝ 2,000,000 ກີບ ສຳລັບໃບອະນຸຍາດປະເພດໜຶ່ງ, 1,000,000 ກີບ ສຳລັບໃບອະນຸຍາດປະເພດສອງ ແລະ 500,000 ກີບ ສຳລັບໃບອະນຸຍາດປະເພດສາມ;
13. ຜູກຂາດ ແລະ ກີດກັນ ຜູ້ໃຫ້ບໍລິການໃໝ່ ຈະຖືກປັບໃໝ 5,000,000 ກີບ;
14. ອຸດໜູນການບໍລິການ, ຄອບງຳ ຫຼື ໃຊ້ອຳນາດການແຂ່ງຂັນທາງການຕະຫຼາດທີ່ບໍ່ເປັນທຳຕໍ່ຜູ້ປະກອບການຂະໜາດຍ່ອຍ ຈະຖືກປັບໃໝ 5,000,000 ກີບ.

**ມາດຕາ 28. ມາດຕະການໂຈະ ແລະ ຖອນໃບອະນຸຍາດ**

ອົງການຄຸ້ມຄອງ ແລະ ກວດກາ ຈະໂຈະໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ໃນກໍລະນີດັ່ງນີ້:

1. ບໍລິການເກີນປະເພດ ຫຼື ຂອບເຂດທີ່ໄດ້ຮັບອະນຸຍາດ;
2. ປອມແປງ, ເຊື່ອງອຳຂໍ້ມູນ ຫຼື ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຕາມການກຳນົດຂອງອົງການຄຸ້ມຄອງ ແລະ ກວດກາ ການໃຫ້ບໍລິການອິນເຕີເນັດ;
3. ຂະຫຍາຍເຄືອຂ່າຍ, ເຊື່ອມຕໍ່ເຄືອຂ່າຍ ຫຼື ດັດແປງລະບົບເຕັກນິກ ໂດຍບໍ່ໄດ້ຮັບອະນຸຍາດ;
4. ບໍ່ຊຳລະຄ່າຊັບພະຍາກອນໂທລະຄົມມະນາຄົມ;
5. ບໍ່ຕໍ່ໃບອະນຸຍາດ ພາຍໃນເວລາ 90 ວັນ ຫຼັງຈາກໃບອະນຸຍາດໝົດອາຍຸແລ້ວ;
6. ເຊື່ອມຕໍ່ເຄືອຂ່າຍອອກສູ່ສາກົນ ໂດຍບໍ່ຜ່ານສູນອິນເຕີເນັດແຫ່ງຊາດ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 14 ຂໍ້2 ຂອງຂໍ້ຕົກລົງສະບັບນີ້;
7. ນຳໃຊ້ ຫຼື ເອື້ອອຳນວຍ ລະບົບອິນເຕີເນັດຂອງຕົນ ໄປໃນທາງທີ່ຜິດກົດໝາຍ;
8. ເກັບຄ່າບໍລິການບໍ່ຖືກຕ້ອງຕາມລະບຽບກົດໝາຍທີ່ກຳນົດໄວ້;
9. ບໍ່ຊຳລະຄ່າທຳນຽມ, ຄ່າບໍລິການ ຫຼື ອາກອນ ໃຫ້ລັດ ຕາມລະບຽບການທີ່ກ່ຽວຂ້ອງ;
10. ຖືກປັບໃໝ ຕາມມາດຕາ 27 ຂອງຂໍ້ຕົກລົງສະບັບນີ້ ຈຳນວນ 02 ຄັ້ງ.

ອົງການຄຸ້ມຄອງ ແລະ ກວດກາ ຈະພິຈາລະນາຖອນໃບອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ໃນກໍລະນີ ດັ່ງນີ້:

1. ຖືກໂຈະໃບອະນຸຍາດ ແຕ່ບໍ່ມີການປັບປຸງຕາມເງື່ອນໄຂທີ່ອົງການຄຸ້ມຄອງ ແລະ ກວດກາກຳນົດ;
2. ນຳໃບອະນຸຍາດໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນ ໂດຍບໍ່ໄດ້ຮັບອະນຸຍາດ;
3. ບໍ່ສືບຕໍ່ດຳເນີນການພາຍໃນໜຶ່ງປີ ຫຼັງຈາກໄດ້ຕໍ່ໃບອະນຸຍາດສົມບູນແລ້ວ;
4. ຖືກປັບໃໝ ຕາມມາດຕາ 27 ຂອງຂໍ້ຕົກລົງສະບັບນີ້ ຈຳນວນ 03 ຄັ້ງ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 29. ການຈັດຕັ້ງປະຕິບັດ**

ມອບໃຫ້ອົງການດັດສົມໂທລະຄົມມະນາຄົມ ແລະ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 30. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ຕົກລົງ ສະບັບນີ້ປ່ຽນແທນຂໍ້ຕົກລົງວ່າດ້ວຍການອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ ສະບັບ ເລກທີ 2530/ປທສ, ລົງວັນທີ 22 ກັນຍາ 2015.

**ລັດຖະມົນຕີ**

ປອ. ທັນສະໄໝ ກົມມະສິດ